E

# ຄໍາແນະນໍາ ໃນການຂຽນຄໍາຮ້ອງຂັ້ນປະຖົມ ສົກສຶກສາ 2007-2008

ຈົ່ງໃຊ້ໃບຄໍາຮ້ອງຂັ້ນປະຖົມ ເພື່ອຮ້ອງຂໍເອົາ ໂຮງຮຽນຕາມການເລືອກຂອງທ່ານ ສໍາຫລັບສົກສຶກສາ 2007-2008 ນີ້. ສໍາຫລັບເລື້ອງຂ່າວເພີ້ມເຕີມອີກນັ້ນ ກະຣຸນາເບິ່ງເອົາຄໍາປຶກສາກັບໜັງສື *ຄູ່ມືໃນການຈົດຊື່ເຂົ້າຮຽນ ສໍາຫລັບພໍ່ແມ່* ສົກ 2007-2008 ຫລື ໄປຫາສູກາງຈົດຊື່ແຫ່ງໃດແຫ່ງໜຶ່ງກໍໄດ້..

**ພາກສ່ວນທີ 1** – ຈົ່ງຂຽນທີ່ຢູ່ບ້ານ ບ່ອນເດັກຂອງທ່ານອາໄສຢູ່ (ທີ່ຢູ່ບ້ານແທ້ນັ້ນ). ຖ້າເດັກຂອງທ່ານຫາກອາໄສຢູ່ ຫລາຍບ່ອນ ເກີນກວ່າໜຶ່ງບ້ານແລ້ວ ຈົ່ງຂຽນທີ່ຢູ່ ອັນທີໜຶ່ງຂອງເຂົາເຈົ້ານັ້ນລົງໃສ່.

**ພາກສ່ວນທີ 2** – ຈົ່ງຂຽນ ຣະດັບຊັ້ນຂອງເດັກທ່ານ <u>ຊຶ່ງຈະແມ່ນ</u> ໃນຣະຍະສົກສຶກສາ 2007-2008.

**ພາກສ່ວນທີ 3 (ຕາມໃຈຊອບ)** – ຈົ່ງຂຽນໃສ່ພາກສ່ວນນີ້ໃຫ້ຄົບຖ້ວນດີເທົ່ານັ້ນ ຖ້າທ່ານມັກຢາກໃຫ້ໃຊ້ ທີ່ຢູ່ບ່ອນຝາກເດັກ ແທນທີ່ຈະໃຊ້ ທີ່ຢູ່ບ້ານນັ້ນ ເພື່ອຕັດສິນໃຫ້ໄດ້ຮັບສິດໃນການຂີ່ລົດຮັບສົ່ງ. ທີ່ຢູ່ຝາກເດັກກໍໄດ້ຮັບການພິຈາຣະນາເປັນ "ທີ່ຢູ່ບໍຣິການ" ແລະ ເອົາໃຊ້ສະເພາະກັບ ການຕັດສິນໃນການໃຫ້ລົດຮັບສົ່ງເທົ່ານັ້ນ ແລະ ການສັບຊ້ອນຕາມກົດໝາຍເທົ່ານັ້ນ. ທີ່ຢູ່ບ່ອນຝາກເດັກ **ບໍ່** ໄດ້ເອົາໃຊ້ ເພື່ອຕັດສິນ ໃຫ້ສິດກ່ອນໝູ່ຂອງການສັບຊ້ອນເລີຍ. ຄວາມໄດ້ຮັບສິດກ່ອນໝູ່ຂອງການສັບຊ້ອນ ແມ່ນອີງໃສ່ທີ່ຢູ່ບ້ານເທົ່ານັ້ນ.

**ພາກສ່ວນທີ 4 (ຕາມໃຈຊອບ)** – ຈົ່ງຂຽນພາກສ່ວນນີ້ ຖ້າທ່ານຕ້ອງການໃຫ້ເດັກຂອງທ່ານເຂົ້າຢູ່ ໂຮງຮຽນບ່ອນດຽວກັບເດັກຜູ່ອື່ນ ທີ່ຢູ່ໃນຄອບຄົວດຽວກັນນີ້ເຂົ້າຢູ່. ເພື່ອໃຫ້ໄດ້ຕາມສິດໄດ້ກ່ອນໝູ່ ສໍາຫລັບໂຮງຮຽນບ່ອນໜຶ່ງ ນັກຮຽນຕ້ອງອາໄສຢູ່ໃນຄອບຄົວດຽວກັນ ແລະ <u>ມີທີ່ຢູ່ບ້ານອັນດຽວກັນ</u> ກັບຜູ້ເປັນພີ່ນ້ອງກັນ ກັບເຂົານີ້. ແມ່ນຄວາມຮັບຜິດຊອບຂອງທ່ານເອງ ທີ່ຮັບປະກັນໃຫ້ ທີ່ຢູ່ບ້ານ ມີຢູ່ໃນບັນທຶກ ສໍາຫລັບຜູ້ເປັນພີ່ນ້ອງກັນນີ້ ຕາມທີ່ທ່ານຂຽນລາຍກາຍລົງໃນພາກສ່ວນນີ້ ໃຫ້ເປັນອັນດຽວກັບທີ່ໄດ້ເອົາໃຫ້ ຢູ່ໃນພາກສ່ວນທີ 1. ມີທີ່ຢູ່ບໍ່ຈະແຈ້ງ ອາດເປັນເຫດກີດກັ້ນ ໃຫ້ເດັກຂອງທ່ານບໍ່ໄດ້ຮັບຕາມສິດທີ່ຄວນໄດ້ກ່ອນຂອງການມີພີ່ນ້ອງ ໃນໂຮງຮຽນນັ້ນ. ຍິ່ງໄປກວ່ານັ້ນ ຜູ້ເປັນພີ່ນ້ອງກັນນີ້ ຕ້ອງໄດ້ຖືກສັບຊ້ອນເຂົ້າໂຮງຮຽນບ່ອນນັ້ນ <u>ໃນສົກສຶກສາ 2007-2008</u> ນີ້. ການມີສິດທີ່ໄດ້ກ່ອນ ຂອງຄວາມເປັນພີ່ນ້ອງກັນນີ້ ບໍ່ໄດ້ເປັນປໂຍດແກ່ ນັກຮຽນໃດ ຖ້າຫາກພີ່ນ້ອງຂອງເຂົາ ບໍ່ໄດ້ຖືກສັບຊ້ອນເຂົ້າ ໃນໂຮງຮຽນນັ້ນ ໃນປີໜ້າ.

**ພາກສ່ວນທີ 5** – ຈົ່ງໃຊ້ **ແຜ່ນເຈັ້ຍໃຫ້ຂຽນເລືອກເອົາຂັ້ນປະຖົມນີ້** (ເຈັ້ຍໃຫ້ຂຽນລອງເບິ່ງ) ທີ່ອໍານວຍໃຫ້ ຢູ່ທາງດ້ານຫລັງຂອງຄໍາແນະນໍານີ້ ເພື່ອຊ່ວຍທ່ານຂຽນລົງໃນພາກສ່ວນທີ 5. ໂຮງຮຽນທີ່ຢູ່ຕາມເຈັ້ຍໃຫ້ຂຽນລອງເບິ່ງນີ້ ແມ່ນໄດ້ຂຽນເປັນລາຍການ ລຽງຕາມຕົວພະຍັນຊະນະ ໂດຍຄຸ້ມໂຮງຮຽນແລ້ວ. ໂຮງຮຽນທີ່ ໃຫ້ລົດຮັບສົ່ງ ແລະ / ຫລື ສິດໄດ້ກ່ອນໝູ່ຂອງການສັບຊ້ອນ ແກ່ຫລາຍກວ່າໜຶ່ງຄຸ້ມໂຮງຮຽນ ແມ່ນໄດ້ຂຽນລົງ ພາຍໃນຄຸ້ມໂຮງຮຽນທີ່ໃຊ້ການໄດ້ກັບ "ນອກຄຸ້ມໂຮງຮຽນ." ໂຮງຮຽນທີ່ໃຊ້ແທນກັນໄດ້ / ບໍ່ແມ່ນໂຮງຮຽນຣັຖ ກໍໄດ້ຂຽນເປັນລາຍການລົງ ດ້ວຍ *ຕົວໜັງສືອຽງ ຫລື ບໍ່ຕັ້ງ*ນັ້ນແລ້ວ, ແລະຈໍາພວກທີ່ເອົາໃຫ້ ແບບສັບຊ້ອນ ແລະ ລົດຮັບສົ່ງກວ້າງຂວາງທົ່ວເມືອງ ແມ່ນໄດ້ຂຽນລົງ ຢູ່ທາງລຸ່ມຂອງເຈັ້ຍໃຫ້ຂຽນລອງເບິ່ງນັ້ນແລ້ວ. ໂຄງການ Montessori, Spectrum, ແລະ APP ໄດ້ຂຽນເປັນລາຍການລົງ ແຍກກັນຕ່າງຫາກ ຈາກໂຄງການປົກກະຕິຂອງໂຮງຮຽນ ບ່ອນທີ່ມີໃຫ້ໄດ້.

ຕາມເຈັ້ຍໃຫ້ຂຽນລອງເບິ່ງນີ້ ຈົ່ງຂຽນຕົວເລກຕາມການເລືອກເອົາໂຮງຮຽນຂອງທ່ານ (ແຕ່ 1 ເຖິງ 10 ) ຕາມລໍາດັບທີ່ທ່ານມັກຫລາຍກວ່າໝູ່ ໂດຍເລີ່ມຈາກເລກ "1" ສໍາຫລັບການເລືອກເອົາອັນທີໜຶ່ງຂອງທ່ານ. ທ່ານອາດເລືອກເອົາໂຮງຮຽນໃດໆ ທີ່ຂຽນລົງເປັນລາຍການນີ້ ອັນໃດກໍໄດ້, ແຕ່ເດັກຂອງທ່ານ ອາດບໍ່ໄດ້ຮັບສິດ ສໍາຫລັບລົດຮັບສົ່ງ ຖ້າທ່ານຫາກເລືອກເອົາ ໂຮງຮຽນທີ່ບໍ່ຢູ່ໃນຄຸ້ມໂຮງຮຽນຂອງທ່ານນີ້.

ໃນພາກສ່ວນທີ 5 ນີ້, ຈົ່ງໃຊ້ເຈັ້ຍທີ່ໄດ້ຂຽນແລ້ວນັ້ນ ເພື່ອຂຽນລົງ <u>ຢ່າງໜ້ອຍສາມ</u> ໂຮງຮຽນ ແລະ ໂຄງການ. ເລີ່ມຕົ້ນດ້ວຍການເລືອກອັນທີໜຶ່ງຂອງທ່ານ ແລະ ຂຽນລົງດ້ວຍຕົວເລກໝາຍປະຈໍາໂຮງຮຽນ ສໍາຫລັບການເລືອກແຕ່ລະອັນນັ້ນ. ຖ້າທ່ານຫາກກໍາລັງຮ້ອງຂໍເອົາ ໂຄງການ Montessori, Spectrum, ຫລື APP (Spectrum ແລະ APP ຈໍາເປັນຕ້ອງໄດ້ຮັບສິດເຂົ້າ), ຈົ່ງຂຽນລົງໃສ່ໃນ box ໂຄງການໃຫ້ເລືອກທີ່ເໝາະສົມນັ້ນ; ປ່ອຍປະໄວ້ ເປົ່າວ່າງ box ໂຄງການໃຫ້ເລືອກນັ້ນ ຖ້າທ່ານກໍາລັງຂໍຮ້ອງເອົາໂຄງການປົກກະຕິ. ຕົວຢ່າງຢູ່ຂ້າງລຸ່ມນີ້ ສະແດງໃຫ້ຮູ້ວ່າ ຈະຂຽນໃສ່ໃນພາກສ່ວນທີ 5 ແນວໃດ ຖ້າວ່າ ການເລືອກຂອງທ່ານອັນທີ ໜຶ່ງ ຫາກແມ່ນ ໂຄງການປົກກະຕິຂອງໂຮງຮຽນ Graham Hill , ອັນທີສອງ ແມ່ນ Leschi Spectrum, ແລະ ອັນທີ ສາມແມ່ນ ໂຄງການປົກກະຕິຂອງໂຮງຮຽນ Leschi:

| | School Number | | | School Name | Optional Program: Mon-tessori | Spec-trum | APP |
|---|---|---|---|---|---|---|---|
| 1 | 2 | 2 | 0 | Graham Hill | ○ | ○ | ○ |
| 2 | 2 | 4 | 4 | Leschi | ○ | ● | ○ |
| 3 | 2 | 4 | 4 | Leschi | ○ | ○ | ○ |

**ພາກສ່ວນທີ 6 (ຕາມໃຈຊອບ)** – ເດັກຂອງທ່ານຈະໄດ້ຖືກເອົາໃສ່ໄວ້ ໃນລາຍຊື່ລໍຖ້າ ສໍາຫລັບການເລືອກເອົາໂຮງຮຽນຂອງທ່ານອັນທີໜຶ່ງ ຖ້າເຂົາຫາກບໍ່ໄດ້ສັບຊ້ອນເຂົ້າໃນໂຮງຮຽນນັ້ນ. ຖ້າທ່ານຢາກຈະໃຫ້ເດັກຂອງທ່ານ ມີຊື່ຢູ່ໃນລາຍຊື່ລໍຖ້າ ສໍາຫລັບໂຮງຮຽນ ນອກເໜືອຈາກການເລືອກເອົາອັນທີໜຶ່ງຂອງທ່ານແລ້ວ ຈົ່ງໝາຍໃສ່ box ຢູ່ໃນພາກສ່ວນທີ 6 ແລະ ຂຽນຊື່ຂອງໂຮງຮຽນລໍຖ້າທີ່ທ່ານມັກກ່ອນໝູ່ໃສ່; ທ່ານອາດເລືອກເອົາ ຕາມການເລືອກຂອງທ່ານໃດໆກໍໄດ້ ຈາກພາກສ່ວນທີ 5. ເດັກຂອງທ່ານກໍຈະຖືກຂຽນໄວ້ຢູ່ ໃນລາຍຊື່ໂຮງຮຽນລໍຖ້າ ທີ່ທ່ານມັກຫລາຍກວ່າໝູ່ເທົ່ານັ້ນ ຖ້າເຂົາຫາກ ໄດ້ຖືກສັບຊ້ອນເຂົ້າຢູ່ໂຮງຮຽນ ທີ່ໄດ້ໝາຍເອົາ ຕາມອັນດັບທີ່ຕໍ່າສຸດ ຢູ່ໃນໃບຄໍາຮ້ອງ ກວ່າຢູ່ໃນລາຍຊື່ໂຮງຮຽນລໍຖ້ານັ້ນ. ບໍ່ດັ່ງນັ້ນ ໂຮງຮຽນລໍຖ້າ ກໍຈະ <u>ໝົດສິດລົງທີ່ການເລືອເອົາໂຮງຮຽນອັນທີໜຶ່ງຂອງທ່ານ</u>. ເດັກຂອງທ່ານ ກໍອາດຈະມີຢູ່ແຕ່ລາຍຊື່ໂຮງຮຽນລໍຖ້າ ເທົ່ານັ້ນ.

**ພາກສ່ວນທີ 7 (ຕາມໃຈຊອບ)** – ຈົ່ງໝາຍເອົາບ່ອນນີ້ ເທົ່ານັ້ນ ຖ້າເດັກຂອງທ່ານຫາກກໍາລັງເຂົ້າຮຽນຢູ່ <u>ປັດຈຸບັນນີ້</u> ໃນໂຮງຮຽນ <u>ທີ່ຢູ່ນອກ</u> ຄຸ້ມໂຮງຮຽນແຖວບ້ານທ່ານ, ທ່ານຢາກໃຫ້ເຂົາ ສືບຕໍ່ເຂົ້າໃນໂຮງຮຽນນັ້ນ ຖ້າວ່າ ບໍ່ມີບ່ອນໃດຢູ່ໃນການເລືອກຂອງທ່ານ ໃນພາກສ່ວນທີ 5 ນີ້ ບໍ່ມີໃຫ້ເລີຍ. ກະຣຸນາຂຽນໃສ່ ຊື່ໂຮງຮຽນປັດຈຸບັນຂອງເດັກທ່ານ ເພື່ອການພິສູດເບິ່ງ.